**ບົດອອກຂ່າວ**
**ກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ**
**29 ມິຖຸນາ 2017, ເວລາ 13:30 ໂມງ, ທີ່ ຫ້ອງປະຊຸມຊັ້ນ 6 ກະຊວງ ແຜນການ ແລະການລົງທຶນ**

---

**ກອງປະຊຸມໂຕະມົນປະຈຳປີ 2017 ເລັ່ງໃສ່ເພີ່ມທະວີ ການເປັນຄູ່ຮ່ວມກັບ ຫຼາຍພາກສ່ວນ ເພື່ອນຳພາປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ**

ໃນຕອນບ່າຍຂອງວັນພະຫັດ, ວັນທີ 29 ມິຖຸນາ 2017, ກະຊວງແຜນການ ແລະການລົງທຶນ ໄດ້ຈັດກອງກອງປະຊຸມປະທານ ແລະ ປະທານຮ່ວມຂອງໜ່ວຍງານຂະແໜງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ໂດຍການເປັນປະທານຂອງ ທ່ານ ດຣ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ແລະ ເປັນປະທານຮ່ວມຂອງ ທ່ານ ນ.ດຣ.ຈູລຽດ ເຟູເຊີລ໌, ຜູ້ຕາງໜ້າອົງການອະນາໄມໂລກປະຈຳ ສປປ ລາວ ທັງເປັນຮັກສາການ ຜູ້ປະສານງານຂອງອົງການສະຫະປະຊາຊາດປະຈຳ ສປປ ລາວ ແລະ ທ່ານ ບາລາຊູບຼາມານຽມ ມູຣາລີ, ຮັກສາການ ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາ ປະຈຳ ສປປ ລາວ. ໃນກອງປະຊຸມໄດ້ມີຜູ້ເຂົ້າຮ່ວມທັງໝົດ 60 ທ່ານ ລວມມີ ຜູ້ຕາງຫນ້າຈາກກະຊວງ, ຂະແໜງການທີ່ກ່ຽວຂ້ອງ ຂັ້ນຮອງລັດຖະມົນຕີ, ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາຄູ່ຮ່ວມພັດທະນາ ຂັ້ນທູດ, ທູຕານຸທູດ ແລະ ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ. ພ້ອມນີ້ ຜູ້ຕາງໜ້າຈາກພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ບັນດາປະເທດສະມາຊິກອາຊຽນ ກໍ່ໄດ້ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອຮັບຟັງການລາຍງານຄວາມຄືບໜ້າ ແລະ ປຶກສາຫາລືກ່ຽວກັບການກະກຽມກອງປະຊຸມໂຕະມົນປະຈຳປີ 2017 ໂດຍສະເພາະແຜນກິດຈະກຳທີ່ຈະຈັດຕັ້ງປະຕິບັດ ເພື່ອກະກຽມໃສ່ກອງປະຊຸມດັ່ງກ່າວ.

ທ່ານ ດຣ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ກ່າວໃນກອງປະຊຸມວ່າ ໃນຕົ້ນເດືອນທີ່ຜ່ານມາ, ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ໄດ້ຖືກຈັດຂຶ້ນ ແລະ ໄດ້ມີການຮັບຮອງເອົາທິດທາງແຜນການ ແລະບົດແນະນຳການກະກຽມກອງປະຊຸມໂຕະມົນປະຈຳປີ 2017, ເຊິ່ງທ່ານໄດ້ເນັ້ນໜັກໃຫ້ເຫັນເຖິງຄວາມສຳຄັນຂອງການເພີ່ມທະວີປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ກໍ່ຄືການຈັດຕັ້ງຜັນຂະຫຍາຍວາລະການພັດທະນາແຫ່ງຊາດ ຢູ່ໃນລະດັບທ້ອງຖິ່ນ. ທ່ານ ຮອງລັດຖະມົນຕີ ຍັງໄດ້ ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ປະກອບຄຳຄິດຄຳເຫັນຕໍ່ເນື້ອໃນຫົວຂໍ້ ແລະ ປະເດັນທີ່ຄວນເນັ້ນໜັກຢູ່ໃນກອງປະຊຸມໂຕະມົນປະຈຳປີນີ້ ເປັນຕົ້ນບັນດາກິດຈະກຳຕ່າງໆ, ກອງປະຊຸມປຶກສາຫາລືໃນລະດັບໜ່ວຍງານຂະແໜງ ການ ແລະ ກອງປະຊຸມປຶກສາຫາລືອື່ນໆທີ່ຈຳເປັນ ເພື່ອກະກຽມໃສ່ກອງປະຊຸມດັ່ງກ່າວ. ນອກນັ້ນ, ກອງປະຊຸມຄັ້ງນີ້ ຍັງໄດ້ປຶກສາຫາລືກ່ຽວກັບຫຼາຍປະເດັນທີ່ມີຄວາມສຳຄັນທີ່ສຸດ ສຳລັບ ການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ເປັນຕົ້ນ ການພັດທະນາມະນຸດ ຄຽງຄູ່ກັນກັບ ການເຕີບໂຕທີ່ມີຄຸນນະພາບ ແລະ ບັນຫາອື່ນໆທາງດ້ານເສດຖະກິດ.




ໃນບາງຕອນຂອງບົດກ່າວເປີດ, ດຣ. ກິແກ້ວ ຈັນທະບູຣີ ໄດ້ກ່າວວ່າ: "ພວກເຮົາຕ້ອງຄົ້ນຄວ້າກໍານົດກົນໄກໃໝ່ໆ ເພື່ອຮັບປະກັນໃຫ້ໄດ້ວ່າສິ່ງທີ່ພວກເຮົາກໍາລັງເຮັດຢູ່ນີ້ໄດ້ປະກອບສ່ວນເຂົ້າໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໄດ້ຢ່າງຫຼວງຫຼາຍ ເພາະເປັນເປົ້າໝາຍສູງສຸດຂອງການຮ່ວມເພື່ອການພັດທະນາ".

ຕໍ່ບັນຫາດັ່ງກ່າວ, ທ່ານ ນ.ດຣ.ຈູລຽດ ເຟູເຊີລ໌, ຜູ້ຕາງໜ້າອົງການອະນາໄມໂລກປະຈໍາ ສປປ ລາວ ທັງເປັນຮັກສາການ ຜູ້ປະສານງານຂອງອົງການສະຫະປະຊາຊາດປະຈໍາ ສປປ ລາວ ກໍ່ໄດ້ກ່າວຢູ່ຕອນໜຶ່ງຂອງບົດປະກອບຄໍາເຫັນເປີດກອງປະຊຸມວ່າ: "ພວກເຮົາຈະຕ້ອງເພີ່ມທະວີການປະສານສົມທົບກັນເພື່ອຮັບປະກັນປະສິດທິຜົນຂອງການນໍາໃຊ້ທຶນຮອນທີ່ມີຈໍາກັດໃນປະຈຸບັນ. ເພື່ອປະຕິບັດໄດ້ຕາມຈຸດປະສົງດັ່ງກ່າວນີ້ ມັນຮຽກຮ້ອງໃຫ້ພວກເຮົາ ທັງຄູ່ຮ່ວມພັດທະນາ ແລະ ລັດຖະບານ ເພີ່ມທະວີປັບປຸງກົນໄກການປະສານງານ, ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຂະແໜງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. ຄຽງຄູ່ກັນນັ້ນ, ກໍ່ຕ້ອງໄດ້ເພີ່ມທະວີການມີສ່ວນຮ່ວມຂອງບັນດາອໍານາດການປົກຄອງແຂວງຕື່ມອີກ. ພ້ອມກັນນີ້, ພວກເຮົາຈະຕ້ອງໄດ້ກະກຽມບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຂອງແຕ່ລະຂະແໜງການ ເຊິ່ງຈະເປັນເອກະສານທີ່ສະ ໜອງຂໍ້ມູນການຈັດຕັ້ງປະຕິບັດກິດຈະກໍາຮ່ວມກັນລະຫວ່າງຂະແໜງການ ລວມທັງສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດວຽກງານໃນໄລຍະທີ່ຜ່ານມາ. ອີກດ້ານໜຶ່ງ, ໃນປະຈຸບັນ, ອົງການສະຫະຊາຊາດເພື່ອການພັດທະນາ ກໍາລັງເຮັດວຽກຮ່ວມກັນກັບ

ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ໃນການປັບປຸງຊ່ອງທາງການເຜີຍແຜ່ຂໍ້ມູນຜ່ານທາງອິນເຕີເນັດ ເພື່ອໃຫ້ສາມາດສະໜອງຂໍ້ມູນໃຫ້ດີຂຶ້ນກວ່າເກົ່າ”.

ໃນກອງປະຊຸມຄັ້ງນີ້ ໄດ້ມີການປະກອບຄຳເຫັນຢ່າງສ້າງສັນ ແລະ ກົງໄປກົງມາ. ກອງປະຊຸມໄດ້ຕົກລົງເປັນເອກະພາບ ແລະ ໄດ້ກຳນົດເອົາຈຸດປະສົງລວມຂອງກອງປະຊຸມໂຕະມົນປະຈຳປີ 2017 ເຊິ່ງເລັ່ງໃສ່ເພີ່ມທະວີ ການເປັນຄູ່ຮ່ວມ ກັບຫຼາຍພາກສ່ວນໃຫ້ມີຄວາມກົມກຽວກັນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ຫົວຂໍ້ກອງປະຊຸມໂຕະມົນໃນປີນີ້ວ່າ: “ເສີມຂະຫຍາຍການເປັນຄູ່ຮ່ວມ ເພື່ອການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ກໍ່ຄືການນຳພາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ.”

ກອງປະຊຸມຍັງໄດ້ເຫັນດີໂດຍຫຼັກການໃຫ້ຈັດກອງປະຊຸມໂຕະມົນປະຈຳປີນີ້ ຢູ່ແຂວງພາກໃຕ້ຂອງລາວ ເຊິ່ງເນື້ອໃນຂອງກອງປະຊຸມໂຕະມົນປະຈຳປີ 2017 ແມ່ນຈະຕິພັນກັບ 1) ການລາຍງານການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2017 ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2018; 2) ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານຕ່າງໆທີ່ປະກອບສ່ວນເຂົ້າໃນການຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ ພ້ອມທັງການກະກຽມໃສ່ການປະເມີນການຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາປະຈຳປີ 2018 ແລະ ການກະກຽມບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງໂດຍສະໝັກໃຈຄັ້ງທຳອິດຂອງ ສປປ ລາວ; 3) ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນຂອງພາກເອກະຊົນທີ່ມີຄຸນນະພາບ ແລະ 4) ການເພີ່ມທະວີການຮ່ວມມືແບບໃຕ້-ໃຕ້ ແລະ ການຮ່ວມມືສາມຫຼ່ຽມ ລວມທັງການເພີ່ມທະວີການຮ່ວມມືກັບບັນດາປະເທດສະມາຊິກອາຊຽນ ຢູ່ໃນຂະບວນການໂຕະມົນ.

ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງມື້ດ້ວຍບັນຍາກາດທີ່ສ້າງສັນ ແລະ ໄດ້ປິດລົງດ້ວຍຄວາມຈົບງາມ.

<u>**ຕິດຕໍ່ຂໍ້ມູນ:**</u>


| | |
|---|---|
| ທ່ານ ມໍລະກົດ ວົງໄຊ<br>ຫົວໜ້າພະແນກສະຫະປະຊາຊາດ<br>ກົມຮ່ວມມືສາກົນ, ກະຊວງ ຜທ<br>ໂທ: 020-2244 8892<br>ອີເມວ: k_vongxay@hotmail.com | ນ. ວີນາ ໂງ່ນວໍຣະຣາດ,<br>ພະນັກງານອາວຸໂສດ້ານການສື່ສານ ແລະ ການສະໜັບສະໜູນທາງວິຊາການໃຫ້ແກ່ການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII,<br>ໜ່ວຍງານ PSU,<br>ໂທ: 020-7786 3939<br>ອີເມວ: venang@gmail.com |